ໂຮງຮຽນວັນອາທິດ

**ວັນອາທິດ ທີ 27 ເດືອນມີນາ 2022 (03-27-2022 )**

**ຊີວິດຂອງຄວາມຮັກ**

*ເມື່ອໃດທ່ານໄດ້ຮັບການຮ້ອງຂໍໃຫ້ເຮັດບາງສິ່ງບາງຢ່າງທີ່ເບິ່ງຕອບແລກຄືວ່າຈະເຫຼືອວິສັຍ?*

**ຈຸດສຳຄັນໃນບົດຮຽນ:** ການທີ່ຍັງຢູ່ໃນພຣະຄຣິດໝາຍເຖິງຄວາມສໍາພັນຂອງພວກເຮົາຖືກຍຶດຕິດຢູ່ດ້ວຍຄວາມຮັກ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບາງສິ່ງບໍ່ສາມາດເຮັດໄດ້ໂດຍບໍ່ມີປະສົບການການຮຽນຮູ້. ເຊັ່ນການຈິນຕະນາການພະຍາຍາມອົບເຄັກເມື່ອທ່ານບໍ່ເຄີຍເຫັນເຄັກຫຼືຮູ້ຣົດຊາດຂອງເຄັກ. ຫຼືຈະຈິນຕະນາການການແນະນຳກັບຜູ້ຊ່ຽວຊານຄົວເຕີແບັກຂອງຟຸດບອນໃນເມື່ອທ່ານບໍ່ເຄີຍເບິ່ງການແຂ່ງຂັນຟຸດບອນ. ບໍ່ມີຂໍ້ກົດບັງຄັບໃດທີ່ຈະເອົາເຄັກອອກຈາກເຕົາອົບຂອງທ່ານຖ້າທ່ານບໍ່ມີແນວຄວາມຄິດກ່ຽວກັບເຄັກ. ບໍ່ມີຄວາມຕັ້ງໃຈທີ່ຈະນຳທີມຂອງທ່ານລົງແຂ່ງຂັນໃນສນາມຖ້າຫາກວ່າທ່ານບໍ່ຮູ້ວ່າການຫຼິ້ນຟຸດບອນນັ້ນເປັນຢ່າງໃດ. ໃນບົດຮຽນນີ້, ພວກເຮົາຈະເຫັນຄຳສັ່ງຂອງພຣະເຢຊູສຳລັບພວກເຮົາທີ່ຈະຮັກ. ຄົນສ່ວນໃຫ່ຍບໍ່ເຫັນຄຸນຄ່າແລະຄຸນງາມຄວາມດີຂອງຄຳສັ່ງນີ້, ແຕ່ສຳລັບພວກເຮົາຮູ້ແທ້ໆວ່າຄວາມຮັກນັ້ນແມ່ນຫຍັງ? ໃນປຶ້ມຂອງລາວ, “ຄວາມຄິດກ່ຽວກັບຕົນເອງ,” ທແຣວິນ ແວັກສ໌ Trevin Wax ໄດ້ຊີ້ໃຫ້ເຫັນວ່າສິ່ງທີ່ຄົນມັກໝາຍເຖິງເຣື່ອງຄວາມຮັກແມ່ນພຽງແຕ່ເປັນການສະໜັບສະໜູນຂອງຄົນອື່ນສຳລັບຕົວເອງທີ່ພວກເຂົາຕ້ອງການ, ແຕ່ວ່າອັນນັ້ນເປັນຄວາມຮັກທີ່ແທ້ຈິງບໍ? ພຣະເຢຊູຕ້ອງການໃຫ້ພວກເຮົາຊີມແລະໃຫ້ເຫັນຄວາມຮັກຂອງພຣະອົງ. ພຽງແຕ່ເທົ່ານັ້ນພວກເຮົາກໍສາມາດຮັກເຊິ່ງກັນແລະກັນໄດ້ດີຂຶ້ນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

## 1. ໂຢຮັນ: 15:9-11

*9. ພຣະບິດາໄດ້ຊົງຮັກເຮົາຢ່າງໃດ ຝ່າຍເຮົາໄດ້ຮັກພວກທ່ານຢ່າງນັ້ນເໝືອນກັນ ຈົ່ງຕັ້ງຢູ່ໃນຄວາມຮັກຂອງເຮົາ. 10. ຖ້າ
ພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ ເໝືອນດັ່ງເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງ
ເຮົາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ. 11. ຂໍ້ຄວາມເຫລົ່ານີ້ເຮົາໄດ້ບອກທ່ານທັງຫລາຍແລ້ວ ເພື່ອຄວາມຍິນດີຂອງ
ເຮົາຈະຢູ່ໃນທ່ານ ແລະຄວາມຍິນດີຂອງທ່ານຈະຄົບບໍຣິບູນ.*

ມີໃຜທີ່ບໍ່ຕ້ອງການຄວາມຊົມຊື່ນຍິນດີ? ດັ່ງນັ້ນ, ສຳລັບພວກເຮົາຫຼາຍໆຄົນ, ຂໍ້ 11 ເປັນຂໍ້ຄວາມທີ່ມັກທີ່ສຸດ. ມັນເປັນຄຳຖແລງການທີ່ໜ້າປລາດໃຈ; ຄວາມຊື່ນຊົມຍິນດີຂອງທ່ານຈະຄົບບໍຣິບູນ. ມີໃຜທີ່ບໍ່ຕ້ອງການຄວາມຊື່ນຊົມຍິນດີທີ່ສົມບູນ?

ພວກເຮົາບໍ່ພຽງແຕ່ຕ້ອງການມັນ; ພວກເຮົາປາຖນາຢ່າງແຮງກ້າທີ່ຈະໄດ້ມັນ. ສຳລັບຄົນຫຼວງຫຼາຍ, ການຊອກສແວງຫາຄວາມຊື່ນຊົມຍິນດີເປັນການຕິດຕາມທີ່ສູນເປົ່າ. ທ່ານອາດຈະມີຫ້ອງເກັບເຄື່ອງອຸປກອນທີ່ໃຊ້ໃນກິຈກັມເພີ້ມທີ່ທ່ານມັກຫຼາຍແລະຫຼັງຈາກນັ້ນກໍລືມມັນໄປ, ຫວັງວ່າຈະມີສິ່ງຂອງນຶ່ງໃນນັ້ນຈະສາມາດຕື່ມເຕັມສ່ວນທີ່ຫ່ວາງເປົ່າໃນຊີວິດຂອງທ່ານ. ບາງທີທ່ານອາດຈະກວດສອບເບິ່ງບັນຊີທະນາຄານຂອງທ່ານສາມເທື່ອຕໍ່ມື້ເພື່ອຫວັງວ່າຈະເຫັນຜົນລວມທີ່ໜ້າພໍໃຈຫຼາຍຂຶ້ນໃນຍອດສະຫຼຸບ. ບັກ ໂຕນຈ້ອງ ເຖິງແມ່ນໄດ້ກະໂດດອອກຈາກເຄື່ອງບິນເພື່ອຄວາມຕື່ນເຕັ້ນຂອງຄວາມຊື່ນຊົມຍິນດີ. ແລະຫຼັງຈາກນັ້ນຈະມີຈຸດທີ່ບາດສຽວ, ພວກທີ່ຕິດຕາມໃຫ້ຮ່າງກາຍແຂງແຮງເຂັ້ມແຂງຂັ້ນສຸດຍອດແລະເບິ່ງຄືວ່າຈະດຳເນີນການຈັດຫາ

ຄວາມຊື່ນຊົມຍິນດີໂດຍການຕິດຕາມຄວາມທຸກທໍລະມານ! ຜູ້ທີ່ຢູ່ນອກຄວາມເຊື່ອຂອງຄຣິສຕຽນອາດຈະຕັ້ງຄໍາຖາມວ່າຄວາມຊື່ນຊົມຍິນດີນັ້ນເປັນໄປໄດ້ບໍ, ແຕ່ພຣະເຈົ້າໄດ້ຊົງສ້າງພວກເຮົາຢ່າງຮັກໃຄ່ໃຫ້ມີຊີວິດທີ່ຊື່ນຊົມຍິນດີ. ພຣະເຢຊູໄດ້ຊີ້ໃຫ້ພວກເຮົາເຫັນເຖິງວິທີທີ່ພວກເຮົາສາມາດມີປະສົບປະການກັບຄວາມຊື່ນຊົມຍິນດີນີ້ໄດ້, ແລະມັນກໍເຫັນໄດ້ຢູ່ໃນສາມຄໍາເວົ້ານີ້.
1. **ຄວາມຮັກ.** ພຣະເຢຊູໄດ້ກ່າວວ່າ, "ຢູ່ໃນຄວາມຮັກຂອງເຮົາ"( ຂໍ້ 9). ຄວາມຮັກຂອງພຣະເຢຊູເປັນກຸນແຈສູ່ຄວາມຊື່ນຊົມຍິນດີຂອງເຮົາ. ນັ້ນເຮັດໃຫ້ມີຄວາມຮູ້ສຶກມີສະງ່າຣາສີເມື່ອພວກເຮົາຈົດຈໍາຄວາມຮັກຂອງພຣະອົງໄດ້ວ່າເປັນແນວໃດ. ພຣະເຢຊູໄດ້ສະເດັດເຂົ້າມາໃນໂລກກໍເພາະຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາ. ພຣະອົງໄດ້ມາເພື່ອສອນພວກເຮົາໃຫ້ເຫັນເຖິງຄວາມຮັກຂອງພຣະບິດາແລະເພື່ອສະແດງຄວາມຮັກນັ້ນຜ່ານທາງການກະທໍາແລະການມະຫັສຈັນຂອງພຣະອົງ. ພຣະອົງໄດ້ສະແດງຄວາມຮັກຕໍ່ພວກເຮົາໃນການກະທໍາຕໍ່ຄວາມບາບຂອງພວກເຮົາ. ໃນຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາ, ພຣະເຢຊູໄດ້ຍຶດເອົາຄວາມບາບທັງໝົດຂອງພວກເຮົາໄວ້ຢູ່ເທິງພຣະກາຍຂອງພຣະອົງ. ພຣະອົງຖືກຕອກຕິດໄວ້ເທິງໄມ້ກາງແຂນ. ພຣະອົງຕາຍ. ພຣະອົງຖືກຝັງໄວ້. ແລະອຸບໂມງເປີດອອກ, ແລະພຣະອົງຟື້ນຄືນຂຶ້ນມາ, ເພື່ອພວກເຮົາຈະໄດ້ໄຊຊນະ, ນີ້ແມ່ນຜູ້ຊ່ວຍໃຫ້ລອດ, ຜູ້ທີ່ໃຫ້ຄວາມສຸກ.
2. **ຍັງຄົງຢູ່.** ພວກເຮົາຕ້ອງຢູ່-ຕໍ່ໄປ, ຢືນຢູ່, ຢຸດເຊົາ, ສະຖິດຢູ່-ໃນຄວາມຮັກອັນປະເສີດຂອງພຣະຄຣິດທີ່ມີຕໍ່ພວກເຮົາ. ເມື່ອພວກເຮົາຢູ່ໃນຄວາມຮັກຂອງພຣະອົງ, ຄວາມຊື່ນຊົມຍິນດີຂອງພວກເຮົາສາມາດຕັ້ງໝັ້ນຄົງຢູ່, ແຕ່ມັນສໍາຄັນທີ່ພວກເຮົາຍັງຄົງຢູ່. ຊຶ່ງມັນເປັນການຄົ້ນຫາກັບພຣະເຢຊູທີ່ນໍາຄວາມຊື່ນຊົມຍິນດີທີ່ພວກເຮົາກໍາລັງຊອກຫາຢູ່ນັ້ນ.
3. **ຮັກສາ.** ເນື່ອງຈາກຄວາມຮັກຂອງພຣະເຢຊູ, ພວກເຮົາຍັງຄົງຢູ່ໃນຄວາມຮັກຂອງພຣະອົງ. ແລະຍ້ອນຄວາມຮັກຂອງພຣະເຢຊູ, ພວກເຮົາຈຶ່ງເຊື່ອຟັງຄໍາສັ່ງຂອງພຣະອົງ. ພຣະເຢຊູເອີ້ນພວກເຮົາໃຫ້ "ຮັກສາຄໍາສັ່ງຂອງເຮົາ" ເຊິ່ງໝາຍຄວາມວ່າພວກເຮົາຄວນເຊື່ອຟັງຜູ້ທີ່ຮັກເຮົາ. ແລະເມື່ອພວກເຮົາເຊື່ອຟັງພຣະບັນຍັດຂອງພຣະອົງ, ພວກເຮົາກໍຍັງຈື່ຈໍາຄວາມຮັກຂອງພຣະອົງ, ໃຫ້ເຊື່ອຟັງແລະຍຶດໝັ້ນໃນຄວາມຮັກທີ່ນໍາພາພວກເຮົາໃຫ້ເຊື່ອຟັງແລະປະຕິບັດຕາມ. ມັນເປັນວົງໂຄຈອນທີ່ບໍ່ໜ້າເຊື່ອຂອງການດໍາເນີນຊີວິດຢູ່ໃນຄວາມຮັກຂອງພຣະອົງ. ພວກເຮົາທັງໝົດຕ້ອງການມີຄວາມຊື່ນຊົມຍິນດີທີ່ສົມບູນ-ແລະພຣະເຢຊູຕ້ອງການໃຫ້ພວກເຮົາມີມັນ. ດ້ວຍເຫດນີ້ພຣະອົງຈຶ່ງເອີ້ນພວກເຮົາໃຫ້ຢູ່ໃນພຣະອົງແລະເຊື່ອຟັງພຣະອົງ. ເມື່ອພວກເຮົາເຮັດສິ່ງທີ່ພຣະອົງເອີ້ນເຮົາໃຫ້ເຮັດ, ພວກເຮົາຈະປະສົບການກັບຄວາມຮັກແລະຄວາມຊື່ນຊົມຍິນດີຂອງພຣະອົງຢູ່ເລື້ອຍໆ. ທີ່ເປັນຄວາມຊື່ນຊົມຍິນດີທີ່ສົມບູນ.

## 2. ໂຢຮັນ 15:12-14.

*12. "ນີ້ແຫລະ, ເປັນຂໍ້ບັນຍັດຂອງເຮົາ ຄືໃຫ້ທ່ານທັງຫລາຍຮັກກັນແລະກັນ ເໝືອນດັ່ງເຮົາໄດ້ຮັກພວກທ່ານ. 13. ບໍ່ມີຜູ້ໃດມີຄວາມຮັກໃຫຍ່ກວ່ານີ້ ຄືການທີ່ຜູ້ນຶ່ງຈະໄດ້ສລະຊີວິດຕາງມິດສະຫາຍຂອງຕົນ. 14. ຖ້າທ່ານທັງຫລາຍເຮັດຂໍ້ທີ່ເຮົາໄດ້ບັນຍັດໄວ້ ພວກທ່ານກໍເປັນມິດສະຫາຍຂອງເຮົາ.*

ບໍ່ມີໃຜມີຄວາມຮັກດີກ່ວາພຣະເຢຊູ. ບໍ່ມີຄວາມຮັກໃດສູງກວ່າ, ເລິກກວ່າ, ກ້ວາງກວ່າ, ຫຼືເຂັ້ມແຂງໄປກວ່າຄວາມຮັກຂອງພຣະຄຣິດ. ບໍ່ມີຄວາມຮັກໃດສົ່ງຜົນກະທົບຕໍ່ຄົນຫຼາຍກວ່າ. ພວກອັຄສາວົກ, ເມື່ອພວກເຂົາໄດ້ຍິນເລື່ອງນີ້, ກໍຄົງຄິດວ່າມັນເປັນກັບເໝືອນຖືກຂໍຮ້ອງໃຫ້ກະໂດດຂ້າມພູເຂົາ. ພວກເຂົາຮູ້ວ່າຄວາມຮັກຂອງພຣະເຢຊູເບິ່ງຄືວ່າ; ພວກເຂົາໄດ້ເຫັນຄວາມຮັກຂອງພຣະເຢຊູຢ່າງໃກ້ຊິດແລະເລິກເຊິ່ງ. ພວກເຂົາໄດ້ເຫັນພຣະອົງປິ່ນປົວພະຍາດ, ປິ່ນປົວຄົນເປັ້ຽລ່ອຍ, ແລະຂັບຜີອອກຈາກຄົນທີ່ມາຫາພຣະອົງ. ພວກເຂົາໄດ້ເຫັນພຣະອົງຮ້ອງໄຫ້, ສອນ, ແລະລ້ຽງດູ. ພວກເຂົາຮູ້ວ່າພຣະອົງຊົງພຣະຊົນຢູ່ດົນນານສໍ່າໃດ. ພວກເຂົາເຫັນພຣະອົງຮັບໃຊ້ຫຼາຍພັນຄົນໂດຍທີ່ບໍ່ມີຫຍັງເປັນຄ່າຕອບແທນ. ພວກເຂົາຍັງບໍ່ທັນຮູ້ທັງໝົດ,

ແຕ່ພຣະເຢຊູຈະສະແດງໃຫ້ພວກເຂົາເຫັນຄວາມຮັກຂອງພຣະອົງຈະແຜ່ກວ້າງໄປໄກພາຍຫຼັງທີ່ພຣະອົງສຣະຊີວິດເທິງໄມ້ກາງແຂນສຳລັບພວກເຂົາ. ດ້ວຍຕົວຢ່າງທີ່ສົມບູນແລະຄວາມຮັກທີ່ຍິ່ງໃຫ່ຍສຳລັບພວກເຂົາ, ພວກເຂົາຕ້ອງຊັ່ງຊາເບິ່ງເຖິງຂນາດນ້ຳໜັກຂອງຄວາມຮັກທີ່ພຣະເຢຊູກ່າວໄວ້ວ່າ: "ຈົ່ງຮັກຊຶ່ງກັນແລະກັນເໝືອນດັ່ງທີ່ເຮົາໄດ້ຮັກພວກທ່ານ"(ຂໍ້ 12).

ພວກເຮົາຈະຮັກແບບທີ່ພຣະເຢຊູຮັກໄດ້ແນວໃດ? ເຖິງແມ່ນວ່າຕົວຢ່າງທີ່ພຣະຄຣິດເຮັດເບິ່ງຄືວ່າບໍ່ສາມາດທີ່ທຳໄດ້, ຄຳຕອບຍັງແມ່ນງ່າຍດາຍ: ພວກເຮົາພະຍາຍາມ, ພວກເຮົາມີປະສົບປະການກັບຄວາມຮັກຂອງພຣະເຢຊູ (ຂ້າພະເຈົ້າຮັກທ່ານ) ແລະພວກເຮົາເຊື່ອຟັງ(ຮັກຊຶ່ງກັນແລະກັນ). ພວກເຮົາເບິ່ງພຣະເຢຊູ, ແລະເພິ່ງໃນອຳນາດຂອງພຣະວິນຍານບໍຣິສຸດ, ພວກເຮົາຕ້ອງຮັກຄືກັບພຣະເຢຊູຮັກ. ແນ່ນອນ, ພວກເຮົາຈະບໍ່ບັນລຸຄວາມຮັກໃນລະດັບດຽວກັນນັ້ນ. ພວກເຮົາຈະບໍ່ເຄີຍຮັກທີ່ມະຫັສຈັນ. ພວກເຮົາອາດບໍ່ສາມາດຮັກໄດ້ໃນລະດັບທີ່ພຣະເຢຊູຮັກແຕ່ເຮົາກໍສາມາດຮັກໃນແບບດຽວກັນໄດ້. ພວກເຮົາອາດຈະບໍ່ເຫັນຜົນກະທົບຢ່າງດຽວກັນຈາກຄວາມຮັກຂອງພວກເຮົາ, ແຕ່ພວກເຮົາສາມາດແບ່ງປັນຄວາມຮັກດຽວກັນ. ພວກເຮົາຮັກດັ່ງທີ່ພວກເຮົາໄດ້ຮັບຄວາມຮັກ. ນັ້ນແມ່ນສິດອຳນາດ. ຈົ່ງຮັກແລະເຊື່ອຟັງ.

ຈາກນັ້ນພຣະເຢຊູໄດ້ຊີ້ແຈງຄຳແນະນຳຂອງພຣະອົງໃນປໂຍກຕໍ່ໄປ. "ບໍ່ມີໃຜມີຄວາມຮັກທີ່ຍິ່ງໃຫ່ຍກວ່ານີ້: ການຍອມຈຳນົນຊີວິດຂອງລາວເພື່ອເພື່ອນຂອງຕົນ" ໝາຍຄວາມວ່າຄວາມຮັກທີ່ພຣະຄຣິດຕ້ອງການໃຫ້ພວກເຮົາມີຕໍ່ກັນແລະກັນ. ນັ້ນໝາຍຄວາມວ່າຄວາມຮັກຂອງພວກເຮົາຄວນຈະເປັນການເສັຽສຣະ. ການຮັກທີ່ພຣະເຢຊູຮັກໝາຍຄວາມວ່າມີ "ວັດຖຸປະສົງ" ສຳລັບຄວາມຕ້ອງການຂອງຄົນອື່ນ. ມັນໝາຍຄວາມວ່າການເສັຽສຣະບາງສິ່ງບາງຢ່າງເພື່ອຜົນປໂຍດຂອງຄົນອື່ນ. ການເຊື່ອຟັງແນວນີ້ເປັນຄືກັບພຣະເຢຊູ. ການເຊື່ອຟັງພຣະບິດາ. ມັນອາດຈະເຮັດໃຫ້ເຮົາເຈັບປວດຫຼືເສັຽຄຸນຄ່າຫຼາຍ, ການທີ່ພວກເຮົາກ້າວໄປຂ້າງໜ້າເພື່ອຄວາມຮັກຂອງເຂົາ H. A. Ironside ເອັດຈ໌ ເອ ໄອເອີນຊາຍ ເວົ້າໄວ້ແນວນີ້. "ມັນເປັນເຣື່ອງນຶ່ງທີ່ຕ້ອງເວົ້າເຖິງຄວາມຮັກແລະອີກຢ່າງນຶ່ງທີ່ສະແດງອອກໃຫ້ເຫັນ, ຂ້າພະເຈົ້າອາດຈະເວົ້າວ່າຂ້າພະເຈົ້າຮັກພໍ່ແມ່, ແຕ່ຍັງປະຕິເສດທີ່ຈະເຮັດທັງໆໃຫ້ເພິ່ນເມື່ອເພິ່ນເຈັບປ່ວຍ. ຄວາມຮັກຍຶດຖືເອົາທຸກສິ່ງ....ຄວາມຮັກແມ່ນສະແດງອອກເປັນການກະທຳດ້ວຍຄວາມເມດຕາແລະໂດຍການເຊື່ອຟັງ. ດັ່ງນັ້ນ, ຖ້າພວກເຮົາບໍ່ສະແດງຄວາມຮັກຂອງພວກເຮົາໂດຍຜ່ານການສະແດງອອກ, ພວກເຮົາກໍບໍ່ໄດ້ຮັກ, ຖ້າຄວາມຮັກຂອງພວກເຮົາບໍ່ເຄີຍມີການເສັຽສຣະ, ພວກເຮົາກໍເວົ້າພຽງແຕ່ປາກ. ພຣະເຢຊູໄດ້ເສັຽສຣະຊີວິດຂອງພຣະອົງເພື່ອພວກເຮົາແລະຮຽກເອີ້ນໃຫ້ພວກເຮົາປະຕິບັດໃນຄວາມເມດຕາ: ຮັກດັ່ງທີ່ພຣະອົງຮັກພວກເຮົາ.

## 3 ໂຢຮັນ 15:15-17

*15. ຕໍ່ໄປເຮົາບໍ່ເອີ້ນທ່ານທັງຫລາຍວ່າຂ້ອຍໃຊ້ ເພາະຂ້ອຍໃຊ້ບໍ່ຮູ້ວ່ານາຍຂອງຕົນກຳລັງເຮັດອັນໃດ ແຕ່ເຮົາເອີ້ນພວກທ່ານວ່າມິດສະຫາຍ ເພາະວ່າທຸກສິ່ງທີ່ເຮົາໄດ້ຍິນຈາກພຣະບິດາຂອງເຮົາ ເຮົາກໍໄດ້ສະແດງໃຫ້ແກ່ພວກທ່ານຊາບແລ້ວ. 16. ບໍ່ແມ່ນທ່ານທັງຫລາຍໄດ້ເລືອກເອົາເຮົາ ແຕ່ຝ່າຍເຮົາໄດ້ເລືອກເອົາພວກທ່ານແລະໄດ້ແຕ່ງຕັ້ງທ່ານທັງຫລາຍເພື່ອໃຫ້ໄປເກີດຜົນແລະເພື່ອຜົນຂອງພວກທ່ານຈະຕັ້ງຢູ່ຖາວອນເພື່ອວ່າ, ເມື່ອທ່ານທັງຫລາຍຈະທູນຂໍສິ່ງໃດຈາກພຣະບິດາໃນນາມຂອງເຮົາພຣະອົງກໍຈະຊົງປະທານສິ່ງນັ້ນແກ່ພວກທ່ານ. 17. ຂໍ້ຄວາມເຫລົ່ານີ້ເຮົາກໍບັນຍັດໄວ້ແກ່ທ່ານທັງຫລາຍເພື່ອພວກທ່ານຈະຮັກກັນແລະກັນ.*

ຫຼາຍຄົນພວກເຮົາຢາກຈະເກີດຜົນເພື່ອພຣະເຢຊູໂດຍປາສຈາກຄວາມຮັກ. ພຣະເຢຊູໄດ້ບອກກັບຜູ້ຕິດຕາມພຣະອົງວ່າ. "ເຮົາໄດ້ແຕ່ງຕັ້ງທ່ານທັງຫລາຍເພື່ອໃຫ້ໄປເກີດຜົນແລະເພື່ອຜົນຂອງພວກທ່ານຈະຕັ້ງຢູ່ຖາວອນ" (ຂໍ້ 16). ພວກເຮົາຕ້ອງການທີ່ຈະນຳເມັດພືດມາປູກລົງດິນ, ແລ້ວເດີນອອກໄປແລະລໍຄອຍໝາກຜົນທີ່ຈະເກີດຂຶ້ນ. ແຕ່ນັ້ນບໍ່ແມ່ນວິທີທາງຂອງການປູກຝັງແລະນັ້ນບໍ່ແມ່ນວິທີທີ່ພວກເຮົາເກີດຜົນທາງດ້ານຝ່າຍຈິດວິນຍານ. ພວກເຮົາຕ້ອງໄດ້ນຳເອົາ "ຄວາມຮັກ, ການຕິດສນິດ,

ແລະການຖນອມຮັກສາ" ເຂົ້າໄປຕາມຂັ້ນຕອນ. ແຕ່ພວກເຮົາກຳລັງເວົ້າກ່ຽວກັບພືດປະເພດໃດ?

- ບາງຄົນຊັ່ງຊາໝາກຜົນດ້ວຍຄວາມສຳເລັດໃນການປະກາດ, ຊຶ່ງໝາຍຄວາມວ່າມີຈັກຄົນທີ່ທ່ານນຳມາເຊື່ອໃນພຣະເຢຊູ.
- ບາງຄົນເຊື່ອມຕໍ່ໝາກຜົນໃສ່ກັບການຮັບໃຊ້, ຊຶ່ງໝາຍຄວາມວ່າການງານທີ່ທ່ານຮັບໃຊ້ໃນພຣະນາມຂອງພຣະເຢຊູ.
- ບາງຄົນຢືນຢັນວ່າໝາກຜົນນີ້ກ່ຽວກັບສາຍສັມພັນສ່ວນຕົວກັບພຣະເຢຊູ. ພຣະລັກສນະຂອງພຣະເຢຊູທີ່ພຣະເຈົ້າປັ້ນໄວ້ໃນຕົວທ່ານ.

ພວກເຮົາເຫັນທັງສາມປະການນີ້ໃນພຣະຄັມພີ. ການທີ່ຈະໃຫ້ຄຳຢືນຢັນເປັນພຽງຄຳພຍານຂອງຜູ້ຕິດຕາມພຣະເຢຊູນັ້ນແມ່ນບໍ່ພຽງພໍ. ການປ່ຽນແປງໃນຊີວິດຕ້ອງເກີດຂຶ້ນ-ແລະເກີດຂຶ້ນຢ່າງຕໍ່ເນື່ອງ-ເພື່ອເປັນຂໍ້ພິສູດຂອງຄຳພຍານ, ແລະເພື່ອຄົນທັງຫຼາຍທີ່ໄດ້ເຫັນການປະພຶດຢ່າງນັ້ນແລ້ວຢາກຕິດຕາມພຣະເຢຊູໄປ, ການປະພຶດປະຕິບັດຕົນໃຫ້ເໝືອນກັບພຣະເຢຊູ, ແລະການດຳເນີນຊີວິດທີ່ເຕັມປ່ຽມດ້ວຍພຣະວິນຍານ.

ຄວາມຮັກເປັນ "ຝຸ່ນ" ທີ່ຊ່ວຍໃນການພະຍາຍາມປະກາດຂ່າວປະເສີດ, ການຮັບໃຊ້ຂອງພວກເຮົາຕໍ່ຄົນອື່ນແລະການດຳເນີນຊີວິດຂອງພວກເຮົາທີ່ຊີ້ໄປຫາພຣະຄຣິດ. ພຣະເຢຊູໄດ້ກ່າວຢ້ຳພຣະບັນຍັດຂອງພຣະອົງໃນຂໍ້ 17: "ຂໍ້ຄວາມເຫຼົ່ານີ້ເຮົາກໍບັນຍັດໄວ້ແກ່ທ່ານທັງຫລາຍຄື: ໃຫ້ພວກທ່ານຮັກກັນແລະກັນ. ຢ່າເຮັດໃຫ້ການດຳເນີນຊີວິດໃນພຣະເຢຊູແລະຄວາມຮັກໃນພຣະເຢຊູກັບການຮັບໃຊ້ໃນພຣະເຢຊູແລະການເກີດຜົນສຳລັບພຣະເຢຊູແຍກອອກຈາກກັນ. ຢ່າພະຍາຍາມປູກໝາກສະຕໍແບຣີໂດຍບໍ່ມີດິນຫຼືແສງແດດ. ຖ້າພວກເຮົາຢາກຈະເກີດຜົນໃຫ້ກັບພຣະຄຣິດພວກເຮົາຕ້ອງສະແດງຄວາມຮັກຂອງພຣະຄຣິດໃຫ້ກັບຄົນອື່ນໆໄດ້ເຫັນ. ພວກເຮົາຕ້ອງຊ່ວຍເຂົາໃຫ້ຮູ້ຈັກແລະເຂົ້າໃຈພຣະເຢຊູຢ່າງດຽວກັນກັບການທີ່ພວກເຮົາຮູ້ຈັກ ເຂົ້າໃຈ ແລະຮັກພຣະອົງດົນນານເຖິງພຽງນີ້.

## ການນຳໃຊ້ໃນຊີວິດ

ການຕິດສນິດຢູ່ໃນພຣະຄຣິດໝາຍຄວາມວ່າຄວາມສັມພັນຂອງພວກເຮົາປະທັບຕາດ້ວຍຄວາມຮັກ. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້.

❖ **ຈົ່ງຈື່ຈຳຄວາມຮັກຂອງພຣະເຈົ້າ.** ຕັ້ງເວລາສັນຍານເຕືອນໃສ່ໂທລະສັບມືຖືຂອງທ່ານໄວ້ໃນແຕ່ລະມື້ພາຍໃນອາທິດນີ້ເພື່ອຈະຢຸດແລະທົບທວນເບິ່ງຄວາມຮັກຂອງພຣະເຢຊູທີ່ມີຕໍ່ທ່ານ. ກຳນົດເວລາໜ້ອຍນຶ່ງເພື່ອປະກາດພຣະກິດຕິຄຸນແກ່ຕົວທ່ານເອງແລະເຂົ້າສນິດໃນຄວາມຮັກຂອງພຣະເຢຊູສຳລັບທ່ານແລະໃຫ້ຄິດກ່ຽວກັບທ່ານທີ່ຈະສາມາດຮັກຄືກັນກັບພຣະອົງ.

❖ **ເລືອກເພື່ອນຄຣິສຕຽນທີ່ຈະຮັກ.** ຄິດເຖິງເພື່ອນຄຣິສຕຽນທີ່ທ່ານຮັກໃນແບບທີ່ເຫັນໄດ້ຊັດເຈນໃນອາທິດນີ້. ຜູ້ໃດທີ່ມີບັນຫາທາງດ້ານສຸຂພາບທີ່ທ່ານສາມາດຊ່ວຍເຂົາໄດ້? ຫຼືຜູ້ໃດທີ່ມີຄວາມຕ້ອງການທາງດ້ານຈິດໃຈທີ່ທ່ານສາມາດເວົ້າປະເລົ້າປະໂລມດ້ວຍຄວາມຮັກຂອງພຣະຄຣິດ? ທ່ານຈະຮັກເພື່ອນຄຣິສຕຽນດ້ວຍຄວາມຮັກທີ່ເສັຽສຣະໄດ້ແນວໃດໃນອາທິດນີ້?

❖ **ເລືອກຄົນທີ່ຍັງບໍ່ຮູ້ກັບພຣະເຈົ້າເພື່ອຈະຮັກ.** ຈົ່ງອະທິຖານເພື່ອຄົນທີ່ຍັງບໍ່ຮູ້ຈັກກັບພຣະເຢຊູ. ຜູ້ທີ່ທ່ານຢາກເຫັນເຂົາໄດ້ສັມຜັດກັບຄວາມຮັກຂອງພຣະເຢຊູຢ່າງດຽວກັບທ່ານໄດ້ຮັບ. ທ່ານຈະຊ່ວຍເຂົາດ້ວຍວິທີໃດແດ່ເພື່ອຊ່ວຍເຂົາໃຫ້ໄດ້ພົບກັບຄວາມຮັກຂອງພຣະຄຣິດໃນອາທິດນີ້.

ໃນພຣະເຢຊູ, ພວກເຮົາໄດ້ເຫັນຄວາມຮັກທີ່ຍິ່ງໃຫຍ່ທີ່ສຸດໃນໂລກທີ່ເຄີຍຮູ້ຈັກ. ຈົ່ງຈົດຈຳໄວ້ວ່າພຣະອົງຊົງຮັກທ່ານແນວໃດ. ແລະຈົດຈຳໄວ້ວ່າທ່ານເອງຕ້ອງການຄວາມຮັກຈາກພຣະອົງຫຼາຍປານໃດ. ແລະນຳເອົາສິ່ງນີ້ມາຄິດທົບທວນເບິ່ງຈັກສອງສາມນາທີວ່າທ່ານຈະພະຍາຍາມຮັກຄົນອື່ນໆໃຫ້ໄດ້ເໝືອນຢ່າງພຣະເຢຊູຄຣິດຮັກທ່ານໃນອາທິດນີ້.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ** https://ulsb.org/sunday-school-2/ **ແປໂດຍ VR.**